# ສິດທິຂອງທ່ານ ແລະ ຄວາມຄຸ້ມຄອງຈາກໃບບິນຄ່າຮັກສາພະຍາບານທີ່ບໍ່ຄາດຄິດ

ເມື່ອທ່ານໄດ້ຮັບການຮັກສາພະຍາບານສຸກເສີນ ຫຼື ໄດ້ຮັບການປິ່ນປົວໂດຍຜູ້ໃຫ້ບໍລິການນອກເຄືອຂ່າຍຢູ່ໂຮງໝໍ ຫຼືສູນຜ່າຕັດຄົນເຈັບນອກໃນເຄືອຂ່າຍ ທ່ານຈະໄດ້ຮັບຄວາມຄຸ້ມຄອງຈາກການຮຽກເກັບຍອດຄົງເຫຼືອ. ໃນກໍລະນີເຫຼົ່ານີ້ ທ່ານບໍ່ຄວນຖືກຮຽກເກັບເງິນເປັນຈຳນວນສູງກວ່າຄ່າໃຊ້ຈ່າຍຮ່ວມ, ຄ່າປະກັນໄພຮ່ວມ ແລະ/ຫຼື ຄ່າໃຊ້ຈ່າຍສ່ວນທຳອິດຂອງແຜນປະກັນຂອງທ່ານ.

**"ການຮຽກເກັບຍອດຄົງເຫຼືອ" (ບາງຄັ້ງເອີ້ນວ່າ "ການຮຽກເກັບເງິນແບບບໍ່ຄາດຄິດ") ແມ່ນຫຍັງ?**
ເມື່ອທ່ານໄປພົບແພດ ຫຼືຜູ້ໃຫ້ບໍລິການດູແລສຸຂະພາບອື່ນໆ
ທ່ານອາດຈະຕ້ອງເສຍຄ່າໃຊ້ຈ່າຍບາງສ່ວນທີ່ຕ້ອງຈ່າຍເອງ ເຊັ່ນ: ຄ່າໃຊ້ຈ່າຍຮ່ວມ, ຄ່າປະກັນໄພຮ່ວມ ແລະ/ຫຼື ຄ່າໃຊ້ຈ່າຍສ່ວນທຳອິດ. ທ່ານອາດຈະມີຄ່າໃຊ້ຈ່າຍເພີ່ມເຕີມ ຫຼື ຕ້ອງຊຳລະຄ່າໃຊ້ຈ່າຍທັງໝົດຖ້າທ່ານໄປພົບຜູ້ໃຫ້ບໍລິການ ຫຼືໄປທີ່ສະຖານພະຍາບານທີ່ບໍ່ຢູ່ໃນເຄືອຂ່າຍຂອງ ແຜນປະກັນສຸຂະພາບຂອງທ່ານ.

"ນອກເຄືອຂ່າຍ" ໝາຍເຖິງຜູ້ໃຫ້ບໍລິການ
ແລະສະຖານພະຍາບານທີ່ບໍ່ໄດ້ເຊັນສັນຍາກັບແຜນປະກັນສຸຂະພາບຂອງທ່ານໃນການໃຫ້ບໍລິການ.
ຜູ້ໃຫ້ບໍລິການນອກເຄືອຂ່າຍອາດຈະໄດ້ຮັບອະນຸຍາດໃຫ້ຮຽກເກັບເງິນຈາກທ່ານສຳລັບສ່ວນຕ່າງລະຫວ່າງຄ່າບໍລິການທີ່ແຜນຂອງທ່ານຈ່າຍໃຫ້ແລະຄ່າບໍລິການເຕັມຈຳນວນທີ່ຮຽກເກັບ. ເຊິ່ງເອີ້ນວ່າ "ການຮຽກເກັບຍອດຄົງເຫຼືອ."
ເງິນຈຳນວນນີ້ອາດຈະຫຼາຍກວ່າຄ່າບໍລິການໃນເຄືອຂ່າຍສຳລັບການບໍລິການແບບດຽວກັນ
ແລະອາດຈະບໍ່ນັບລວມເຂົ້າໃນຄ່າໃຊ້ຈ່າຍສ່ວນທຳອິດ
ຫຼືຂີດຈຳກັດຄ່າໃຊ້ຈ່າຍສ່ວນທີ່ຕ້ອງຈ່າຍເອງປະຈຳປີຂອງແຜນປະກັນຂອງທ່ານ.

"ການຮຽກເກັບເງິນແບບບໍ່ຄາດຄິດ" ແມ່ນການຮຽກເກັບຍອດຄົງເຫຼືອແບບບໍ່ຄາດຄິດ.
ເຊິ່ງອາດເກີດຂຶ້ນໄດ້ໃນກໍລະນີທີ່ທ່ານບໍ່ສາມາດຄວບຄຸມໄດ້ວ່າບຸຄຄົນໃດທີ່ມີສ່ວນຮ່ວມໃນການດູແລຮັກສາທ່ານ
ເຊັ່ນ: ເມື່ອທ່ານມີເຫດສຸກເສີນ
ຫຼືເມື່ອທ່ານມີນັດໄປພົບແພດໃນສະຖານພະຍາບານທີ່ຢູ່ໃນເຄືອຂ່າຍແຕ່ໄດ້ຮັບການປິ່ນປົວໂດຍຜູ້ໃຫ້ບໍລິການນອກເຄືອຂ່າຍໂດຍບໍ່ຄາດຄິດມາກ່ອນ.
ການຮຽກເກັບເງິນຄ່າຮັກສາພະຍາບານແບບບໍ່ຄາດຄິດອາດມີຄ່າໃຊ້ຈ່າຍຫຼາຍພັນໂດລາ ຂຶ້ນຢູ່ກັບຫັດຖະການ ຫຼືການບໍລິການ.

**ທ່ານໄດ້ຮັບຄວາມຄຸ້ມຄອງຈາກການຮຽກເກັບຍອດຄົງເຫຼືອສຳລັບບໍລິການຕໍ່ໄປນີ້**

**ບໍລິການສຸກເສີນ**
ຖ້າທ່ານມີອາການເຈັບປ່ວຍສຸກເສີນ ແລະໄດ້ຮັບການບໍລິການສຸກເສີນຈາກຜູ້ໃຫ້ບໍລິການ
ຫຼືສະຖານພະຍາບານນອກເຄືອຂ່າຍ ຈຳນວນເງິນສູງສຸດທີ່ຜູ້ໃຫ້ບໍລິການ
ຫຼືສະຖານພະຍາບານນອກເຄືອຂ່າຍຈະສາມາດຮຽກເກັບຈາກທ່ານໄດ້
ແມ່ນຈຳນວນທີ່ເປັນສ່ວນແບ່ງຄ່າໃຊ້ຈ່າຍຂອງແຜນປະກັນຂອງທ່ານ (ເຊັ່ນ: ຄ່າໃຊ້ຈ່າຍຮ່ວມ, ຄ່າປະກັນໄພຮ່ວມ ແລະຄ່າໃຊ້ຈ່າຍສ່ວນທຳອິດ). ທ່ານຈະບໍ່ຖືກຮຽກເກັບເງິນທີ່ເປັນຍອດຄົງເຫຼືອສຳລັບການບໍລິການສຸກເສີນເຫຼົ່ານີ້.
ເຊິ່ງລວມທັງບໍລິການຕ່າງໆທີ່ທ່ານອາດຈະໄດ້ຮັບຫຼັງຈາກທີ່ທ່ານມີອາການຄົງທີ່ ເວັ້ນເສຍແຕ່ວ່າທ່ານຈະໃຫ້ຄວາມຍິນຍອມເປັນລາຍລັກອັກສອນ
ແລະຍອມສະຫຼະຄວາມຄຸ້ມຄອງຂອງທ່ານຈາກການຮຽກເກັບຍອດຄົງເຫຼືອສຳລັບບໍລິການເຫຼົ່ານີ້ຫລັງຈາກທີ່ມີອາການຄົງທີ່.

**ບໍລິການບາງຢ່າງຢູ່ໂຮງໝໍ ຫຼື ສູນຜ່າຕັດຄົນເຈັບນອກໃນເຄືອຂ່າຍ**
ເມື່ອທ່ານໄດ້ຮັບບໍລິການຈາກໂຮງໝໍ ຫຼື ສູນຜ່າຕັດຄົນເຈັບນອກໃນເຄືອຂ່າຍ ຜູ້ໃຫ້ບໍລິການບາງລາຍຢູ່ທີ່ນັ້ນອາດຈະຢູ່ນອກເຄືອຂ່າຍ. ໃນກໍລະນີເຫຼົ່ານີ້ ຈຳນວນເງິນສູງສຸດທີ່ຜູ້ໃຫ້ບໍລິການເຫຼົ່ານັ້ນຈະສາມາດຮຽກເກັບຈາກທ່ານໄດ້ ແມ່ນຈຳນວນທີ່ເປັນສ່ວນແບ່ງຄ່າໃຊ້ຈ່າຍໃນເຄືອຂ່າຍຂອງທ່ານ. ເຊິ່ງນຳໃຊ້ກັບບໍລິການທາງການແພດສຸກເສີນ, ການວາງຢາມຶນ, ພະຍາດວິທະຍາ, ລັງສີວິທະຍາ, ຫ້ອງປະຕິບັດການ, ກຸມານເວດສາດ, ຜູ້ຊ່ວຍໝໍຜ່າຕັດ, ແພດ

ປະຈຳໂຮງໝໍ ຫຼື ແພດເບິ່ງແຍງຄົນເຈັບວິກິດ. ຜູ້ໃຫ້ບໍລິການເຫຼົ່ານີ້ບໍ່ສາມາດຮຽກເກັບຍອດຄົງເຫຼືອຈາກທ່ານໄດ້ ແລະບໍ່ສາມາດຂໍໃຫ້ທ່ານສະຫຼະສິດຂອງທ່ານໃນການໄດ້ຮັບຄວາມຄຸ້ມຄອງຈາກການຮຽກເກັບຍອດຄົງເຫຼືອໄດ້.

ຖ້າທ່ານໄດ້ຮັບບໍລິການປະເພດອື່ນໆຢູ່ໃນສະຖານພະຍາບານໃນເຄືອຂ່າຍເຫຼົ່ານີ້ ຜູ້ໃຫ້ບໍລິການນອກເຄືອຂ່າຍບໍ່ສາມາດຮຽກເກັບຍອດຄົງເຫຼືອຈາກທ່ານໄດ້ ເວັ້ນເສຍແຕ່ວ່າທ່ານຈະໃຫ້ຄວາມຍິນຍອມເປັນລາຍລັກອັກສອນ ແລະສະຫຼະຄວາມຄຸ້ມຄອງຂອງທ່ານ.

**ທ່ານບໍ່ຈຳເປັນຕ້ອງສະຫຼະຄວາມຄຸ້ມຄອງຈາກການຮຽກເກັບຍອດຄົງເຫຼືອ. ນອກຈາກນັ້ນ ທ່ານບໍ່ຈຳເປັນຕ້ອງຮັບການດູແລຮັກສານອກເຄືອຂ່າຍ. ທ່ານສາມາດເລືອກຜູ້ໃຫ້ບໍລິການ ຫຼືສະຖານພະຍາບານໃນເຄືອຂ່າຍແຜນປະກັນຂອງທ່ານໄດ້.**

**ໃນຂະນະທີ່ບໍ່ອະນຸຍາດໃຫ້ມີການຮຽກເກັບຍອດຄົງເຫຼືອ ທ່ານຍັງໄດ້ຮັບຄວາມຄຸ້ມຄອງຕໍ່ໄປນີ້ເຊັ່ນກັນ:**

- ທ່ານມີໜ້າທີ່ຮັບຜິດຊອບສະເພາະການຈ່າຍເງິນຈຳນວນທີ່ເປັນສ່ວນແບ່ງຄ່າໃຊ້ຈ່າຍຂອງທ່ານເທົ່ານັ້ນ (ເຊັ່ນ: ຄ່າໃຊ້ຈ່າຍຮ່ວມ, ຄ່າປະກັນໄພຮ່ວມ ແລະ ຄ່າໃຊ້ຈ່າຍສ່ວນທຳອິດທີ່ທ່ານຈຳເປັນຕ້ອງຈ່າຍ ຖ້າຜູ້ໃຫ້ບໍລິການ ຫຼື ສະຖານພະຍາບານຢູ່ໃນເຄືອຂ່າຍ). ແຜນປະກັນຂອງທ່ານຈະຈ່າຍຄ່າໃຊ້ຈ່າຍໃຫ້ແກ່ຜູ້ໃຫ້ບໍລິການ ແລະສະຖານພະຍາບານນອກເຄືອຂ່າຍໂດຍກົງ.
- ໂດຍທົ່ວໄປແລ້ວ ແຜນປະກັນສຸຂະພາບຂອງທ່ານຕ້ອງດຳເນີນການຕໍ່ໄປນີ້
    - ຄຸ້ມຄອງການບໍລິການສຸກເສີນໂດຍບໍ່ຈຳເປັນຕ້ອງໃຫ້ທ່ານຂໍຮັບການອະນຸມັດສຳລັບການບໍລິການກ່ອນລ່ວງໜ້າ (ຫຼືເອີ້ນອີກຢ່າງໜຶ່ງວ່າ "ການອະນຸຍາດກ່ອນລ່ວງໜ້າ").
    - ຄຸ້ມຄອງການບໍລິການສຸກເສີນຈາກຜູ້ໃຫ້ບໍລິການນອກເຄືອຂ່າຍ.
    - ອ້າງອີງຈຳນວນເງິນທີ່ທ່ານຄ້າງຈ່າຍຜູ້ໃຫ້ບໍລິການ ຫຼື ສະຖານບໍລິການ (ສ່ວນແບ່ງຄ່າໃຊ້ຈ່າຍ) ທີ່ເປັນຄ່າໃຊ້ຈ່າຍທີ່ແຜນປະກັນຕ້ອງຈ່າຍໃຫ້ກັບຜູ້ໃຫ້ບໍລິການ ຫຼື ສະຖານພະຍາບານໃນເຄືອຂ່າຍ ແລະສະແດງເງິນຈຳນວນນັ້ນໄວ້ໃນຄຳອະທິບາຍຜົນປະໂຫຍດຂອງທ່ານ.
    - ນັບເອົາຈຳນວນເງິນໃດໜຶ່ງທີ່ທ່ານຈ່າຍສຳລັບການບໍລິການສຸກເສີນ ຫຼື ການບໍລິການນອກເຄືອຂ່າຍເຂົ້າໃສ່ວົງເງິນທີ່ເປັນຂີດຈຳກັດຂອງຄ່າໃຊ້ຈ່າຍສ່ວນທຳອິດ ແລະຈຳນວນເງິນທີ່ຕ້ອງຈ່າຍເອງໃນເຄືອຂ່າຍຂອງທ່ານ.

**ຖ້າທ່ານເຊື່ອວ່າທ່ານຖືກຮຽກເກັບເງິນເນື່ອງຈາກຄວາມຜິດພາດ** ກະລຸນາຕິດຕໍ່ຫາຫ້ອງການທຸລະກິດຂອງພວກເຮົາທີ່ເບີ 320-864-7101 ເພື່ອແກ້ໄຂຂໍ້ກັງວົນຂອງທ່ານ.

ຖ້າທ່ານຍັງຄົງມີຂໍ້ກັງວົນທີ່ບໍ່ໄດ້ຮັບການແກ້ໄຂ ທ່ານສາມາດຕິດຕໍ່ຫາຫ້ອງການໄອຍະການສູງສຸດຂອງລັດມິນນິໂຊຕາທີ່ເບີ 651-296-3353 ຫຼື 1-800-627-3529 (ບໍລິການຖ່າຍທອດສັນຍານລັດມິນນິໂຊຕາ).

ໄປທີ່ cms.gov ເພື່ອເບິ່ງຂໍ້ມູນເພີ່ມເຕີມກ່ຽວກັບສິດທິຂອງທ່ານພາຍໃຕ້ກົດໝາຍຂອງລັດຖະບານກາງ ຫຼື ໂທຫາພະແນກສາທາລະນະສຸກ ແລະບໍລິການມະນຸດທີ່ເບີ 1-800-985-3059.